# ມາດຕະຖານ
# ກິດຈະກຳການທ່ອງທ່ຽວທາງນ້ຳ



# ມາດຕະຖານກິດຈະກໍາການທ່ອງທ່ຽວທາງນໍ້າ

## (ເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ)

ກະກຽມໂດຍ: ກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ຮ່ວມກັບ ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງວຽງຈັນ

ສະໜັບສະໜູນໂດຍ: ໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ ໄລຍະ 2

# ຄຳນຳ

ມາດຕະຖານກິດຈະກຳການທ່ອງທ່ຽວທາງນ້ຳສະບັບນີ້ແມ່ນເນັ້ນໃສ່ເຕັກນິກ ແລະ ການບໍລິການ ຂອງເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ ເພື່ອເປັນການແນະນຳທາງດ້ານວິຊາການ ໃຫ້ແກ່ຜູ້ປະກອບການທຸລະກິດການທ່ອງທ່ຽວ ແລະ ນັກທ່ອງທ່ຽວ ໃຫ້ມີການບໍລິການທີ່ມີຄຸນນະພາບ ແລະ ໄດ້ມາດຕະຖານ ຂຶ້ນເທື່ອລະກ້າວ, ເພື່ອເປັນເຄື່ອງມື ໃນການການພັດທະນາ, ການຄຸ້ມຄອງ ແລະ ການສົ່ງເສີມການທ່ອງທ່ຽວ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຢູ່ເມືອງວັງວຽງ ແຂວງວຽງຈັນ. ທັງຊ່ວຍເພີ່ມຄວາມອາດສາມາດໃນການ ແຂ່ງຂັນດ້ານການຕະຫຼາດ ແລະ ຍັງຊ່ວຍປັບປຸງວິຖີຊີວິດການເປັນຢູ່ ຂອງ ປະຊາຊົນທ້ອງຖິ່ນໃຫ້ດີຂື້ນ.

ການກຳນົດເງື່ອນໄຂ ແລະ ມາດຕະການຕ່າງໆ ໃນມາດຕະຖານກິດຈະກຳການທ່ອງທ່ຽວທາງນ້ຳສະບັບນີ້, ໄດ້ສ້າງຂຶ້ນບົນພື້ນຖານການຖອດຖອນບົດຮຽນຈາກພາຍໃນ ແລະ ຕ່າງປະເທດ, ໂດຍແມ່ນກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ຮ່ວມກັບພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງວຽງຈັນ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກທຸລະກິດ ຮ່ວມກັນກຳນົດເນື້ອໃນດັ່ງກ່າວ.

ຂໍສະແດງຄວາມຂອບໃຈ ມາຍັງໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ ທີ່ໄດ້ໃຫ້ການສະໜັບສະໜູນທາງດ້ານທຶນຮອນ ໃນການສ້າງມາດຕະຖານຂຶ້ນມາ, ຫວັງຢ່າງຍິ່ງວ່າ ມາດຕະຖານກິດຈະກຳການທ່ອງທ່ຽວທາງນ້ຳສະບັບນີ້ ຈະເປັນບ່ອນອີງໃຫ້ແກ່ພາກລັດ ແລະ ພາກທຸລະກິດ ນຳໄປປັບປຸງການບໍລິການ ແລະ ການບໍລິຫານຄຸ້ມຄອງ ໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່າ.

# ສາລະບານ

ຄຳນຳ I
ສາລະບານ ........ II
ພາກທີ I ພາກສະເໜີ ........ 1
1.1 ເຫດຜົນ ແລະ ຫຼັກການພື້ນຖານ ........ 1
1.2 ອະທິບາຍຄຳສັບ ........ 2
1.3 ຈຸດປະສົງ ........ 3
1.4 ຂອບເຂດການນຳໃຊ້ ........ 3
1.5 ຜົນປະໂຫຍດທີ່ຈະໄດ້ຮັບ ........ 3
ພາກທີ II ........ 4
ບັນດາເງື່ອນໄຂຫຼັກສຳລັບກິດຈະກຳການທ່ອງທ່ຽວ ........ 4
2.1 ບັນດາເງື່ອນໄຂ ........ 4
2.1.1 ເງື່ອນໄຂສຳລັບຜູ້ປະກອບການ ........ 4
2.1.2 ເງື່ອນໄຂໃນການກຳນົດພື້ນທີ່ໃຫ້ບໍລິການ ........ 6
2.1.3 ເງື່ອນໄຂສຳລັບນັກທ່ອງທ່ຽວ ........ 6
2.2 ການປະເມີນບັນດາເງື່ອນໄຂ ແລະ ເກນໃຫ້ຄະແນນ ........ 7
2.3 ການອອກໃບຢັ້ງຢືນ ........ 9
ພາກທີ III ........ 11
ມາດຕະການໃນການຈັດຕັ້ງປະຕິບັດ, ນະໂຍບາຍ, ມາດຕະການຕໍ່ຜູ້ລະເມີດ ........ 11
3.1 ຂໍ້ຫ້າມ ........ 11
3.2 ການແກ້ໄຂຂໍ້ຂັດແຍ່ງ ........ 11
3.3 ນະໂຍບາຍຕໍ່ຜູ້ມີຜົນງານ ........ 11
3.4 ມາດຕະການຕໍ່ຜູ້ະເມີດ ........ 11
ເອກະສານອ້າງອີງ ........ 14

# ພາກທີ I
# ພາກສະເໜີ

## 1.1 ເຫດຜົນ ແລະ ຫຼັກການພື້ນຖານ

ຕະຫຼອດໄລຍະຂອງການເຕີບໃຫຍ່ຂະຫຍາຍຕົວຂອງວຽກງານການທ່ອງທ່ຽວ ຊຶ່ງມີຫຼາຍກິດຈະກຳການທ່ອງທ່ຽວ ທີ່ໄດ້ມີການພັດທະນາຂຶ້ນຕາມຄວາມຮຽກຮ້ອງຕ້ອງການຂອງນັກທ່ອງທ່ຽວເປັນຕົ້ນ: ກິດຈະກຳແບບພະຈົນໄພ ແລະ ກິດຈະກຳທ່ຽວຊົມທຳມະຊາດເພື່ອການພັກຜ່ອນ. ໜຶ່ງໃນກິດຈະກຳທີ່ໄດ້ ຮັບຄວາມນິຍົມຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ໄດ້ສ້າງຄວາມເພິ່ງພໍໃຈ, ຮຽນຮູ້ວິຖີຊີວິດ, ວັດທະນະທຳຂອງປະຊາຊົນ ທ້ອງຖິ່ນ ແລະ ກິດຈະກຳດັ່ງກ່າວ ກໍໄດ້ຮັບການຂະຫຍາຍຕົວຂຶ້ນໄປເລື້ອຍໆເຊັ່ນ: ກິດຈະກຳການລ່ອງເຮືອກາຍັກ, ການບໍລິການເຮືອຈັກຫາງຍາວ ແລະ ກົງເບັງ. ແຕ່ການຈັດຕັ້ງປະຕິບັດຍັງບໍ່ທັນລວມສູນ ແລະ ຍັງບໍ່ທັນມີລະບຽບການສະເພາະ ຫຼື ມາດຕະຖານທີ່ແນ່ນອນ , ເພື່ອເປັນການຄຸ້ມຄອງ ແລະ ສ້າງຄວາມເປັນເອກກະພາບ ສິ່ງສຳຄັນໃຫ້ມີມາດຕະຖານທີ່ສາກົນຍອມຮັບ ແລະ ນັກທ່ອງທ່ຽວທີ່ມາໃຊ້ບໍລິການກໍໃຫ້ມີຄວາມໝັ້ນໃຈ ຮັບປະກັນຄວາມປອດໄພທາງດ້ານຊີວິດ ແລະ ຊັບສິນຕ່າງໆ, ດັ່ງນັ້ນ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ວຽງຈັນ ຈຶ່ງໄດ້ປະສານສົມທົບກັບກົມພັດທະນາການທ່ອງທ່ຽວ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການສ້າງມາດຕະຖານກິດຈະກຳການທ່ອງທ່ຽວທາງນ້ຳ ໃຫ້ເປັນເອກະພາບ ແລະ ເປັນທີ່ຍອມຮັບ ໃຫ້ແກ່ນັກທ່ອງທ່ຽວ, ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ບຸກຄົນທົ່ວໄປ ລວມທັງການກຳນົດແນວທາງໃນການບໍລິຫານຄຸ້ມຄອງກິດຈະກຳການທ່ອງທ່ຽວທາງນ້ຳ ເຊັ່ນ: ລອງເຮືອກາຍັກ, ເຮືອຈັກຫາງຍາວ ແລະ ການບໍລິການກົງເບັງ ໃຫ້ປະຕິບັດຕາມມາດຕະຖານທີ່ກຳນົດໄວ້.

ຫຼັກການພື້ນຖານສຳລັບກິດຈະກຳການທ່ອງທ່ຽວເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ ປະກອບມີອົງປະກອບ, ປັດໃຈ ແລະ ຕົວຊີ້ບອກເພື່ອສະດວກໃນການກຳນົດກິດຈະກຳການທ່ອງທ່ຽວມີຄວາມ ຮັບຜິດຊອບຕໍ່ສິ່ງແວດລ້ອມ, ການປົກ ປັກຮັກສາທຳມະຊາດ, ປະຊາຊົນມີສ່ວນຮ່ວມ ແລະ ມີຄວາມຍືນຍົງ. ໂດຍຄະນະຮັບຜິດຊອບໄດ້ກຳນົດເກນມາດຕະຖານອອກ ເປັນ 3 ເງື່ອນໄຂຫຼັກຄື: 1). ເງື່ອນໄຂສຳລັບ ຜູ້ປະກອບການ, 2). ເງື່ອນໄຂສຳລັບພື້ນທີ່, ແລະ 3). ເງື່ອນໄຂສຳລັບນັກທ່ອງທ່ຽວ. ໃນ 3 ເງື່ອນໄຂທີ່ກ່າວ ມາຂ້າງເທິງນັ້ນ ແມ່ນລວມເອົາສິ່ງທີ່ຕ້ອງປະຕິບັດໃນການບໍລິການນັກທ່ອງທ່ຽວ ເພື່ອທັນເຂົ້າສູ່ມາດຕະຖານ ແລະ ຄວາມປອດໄພແກ່ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.

## 1.2 ອະທິບາຍຄໍາສັບ

**ມາດຕະຖານໝາຍເຖິງ:** ການກໍານົດຄຸນລັກສະນະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ສິ່ງແວດລ້ອມ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງກັບມາດຕະຖານເພື່ອຕີລາຄາ, ຈັດແບ່ງປະເພດ ແລະ ຈັດລະດັບຄຸນນະພາບຂອງສິ່ງທີ່ກ່າວມານັ້ນ.

**ມາດຕະຖານກິດຈະກໍາການທ່ອງທ່ຽວ:** ໝາຍເຖິງການກໍານົດເງື່ອນໄຂ ແລະ ຕົວຊີ້ບອກເພື່ອແນ່ໃສ່ການປັບປຸງຄຸນນະພາບຂອງຜະລິດຕະພັນການທ່ອງທ່ຽວນັ້ນໆ ໃຫ້ມີຄຸນນະພາບສູງຂຶ້ນ.

**ກິດຈະກໍາການທ່ອງທ່ຽວທາງນໍ້າ:** ໝາຍເຖິງການໃຊ້ເຮືອ, ອຸປະກອນປະເພດຕ່າງໆ ເພື່ອບໍລິການການທ່ອງທ່ຽວຕາມລໍາແມ່ນໍ້າ ເພື່ອຊົມທິວທັດທໍາມະຊາດທີ່ສວຍງາມ ແລະ ມີປະຫວັດຄວາມເປັນມາທີ່ໜ້າສົນໃຈແກ່ນັກທ່ອງທ່ຽວ

**ເຮືອກາຍັກໝາຍເຖິງ:** ເຮືອພາຍຢາງ ນໍາໃຊ້ເພື່ອບໍລິການແກ່ນັກທ່ອງທ່ຽວຕາມແມ່ນໍ້າ.

**ເຮືອຈັກຫາງຍາວໝາຍເຖິງ:** ເຮືອທີ່ໃຊ້ເຄື່ອງຈັກໃນການຂັບເຄື່ອນ ເພື່ອບໍລິການແກ່ນັກທ່ອງທ່ຽວຕາມແມ່ນໍ້າ.

**ກົງເບັງໝາຍເຖິງ:** ອຸປະກອນຢາງໃນລົດໃຫຍ່ ສາມາດໃຊ້ເປັນພາຫະນະຂີ່ ຫຼື ລ່ອງຕາມແມ່ນໍ້າ.

**ອຸປະກອນໝາຍເຖິງ:** ເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ

**ການມີສ່ວນຮ່ວມຂອງປະຊາຊົນໝາຍເຖິງ:** ປະຊາຊົນທ້ອງຖິ່ນເຂົ້າມາຮ່ວມກັບກິດຈະກໍາດ້ານການທ່ອງທ່ຽວເປັນຕົ້ນ: ພະນັກງານນໍາທ່ຽວ, ຜູ້ສະໜອງການບໍລິການອາຫານ, ເຄື່ອງດື່ມ, ການບໍລິການຂີ່ສະລີງ ແລະ ກິດຈະກໍາການທ່ອງທ່ຽວອື່ນໆ.

**ຜູ້ປະກອບການໝາຍເຖິງ:** ຜູ້ສໍາປະທານແຫຼ່ງທ່ອງທ່ຽວ, ບໍລິສັດທ່ອງທ່ຽວ, ສະມາຄົມບໍລິການທ່ອງທ່ຽວ ແລະ ກຸ່ມບ້ານທີ່ສະໜອງການບໍລິການທ່ອງທ່ຽວຕ່າງໆ.

**ກິດຈະກໍາການທ່ອງທ່ຽວ** ໝາຍເຖິງ ການເຄື່ອນໄຫວວຽກງານກ່ຽວກັບການບໍລິນັກທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດເຊັ່ນ: ການທ່ຽວຊົມ, ການບູລະນະແຫຼ່ງທ່ອງທ່ຽວ, ການພັກເຊົາ, ການບໍລິການສະຖານທີ່ພັກແຮມ ແລະ ການນໍາທ່ຽວ.

**ຜະລິດຕະພັນທ່ອງທ່ຽວໝາຍເຖິງ:** ຊັບພະຍາກອນການທ່ອງທ່ຽວຕາມທໍາມະຊາດ ແລະ ມະນຸດສ້າງຂຶ້ນເພື່ອເປັນສິ່ງຮອງຮັບ, ສະໜອງ ແລະ ບໍລິການໃຫ້ນັກທ່ອງທ່ຽວ

**ແຫຼ່ງທ່ອງທ່ຽວໝາຍເຖິງ** ຊັບພະຍາກອນການທ່ອງທ່ຽວທີ່ໄດ້ຮັບການພັດທະນາໃຫ້ເປັນສະຖານທີ່ທ່ອງທ່ຽວ ເພື່ອສາມາດດຶງດູດນັກທ່ອງທ່ຽວໃຫ້ເດີນທາງມາທ່ຽວຊົມ

**ສະຖານທີທ່ອງທ່ຽວໝາຍເຖິງ** ແຫຼ່ງທ່ອງທ່ຽວທີ່ໄດ້ຮັບການພັດທະນາ ແລະ ມີການບໍລິການໃຫ້ແກ່ນັກທ່ອງທ່ຽວ

## 1.3 ຈຸດປະສົງ

- ເພື່ອກຳນົດເງື່ອນໄຂຕົວຊີ້ບອກໃນການກຳນົດເກນມາດຕະຖານກິດຈະກຳເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ ແນ່ໃສ່ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວທີ່ມີຄວາມຮັບຜິດຊອບ
- ເພື່ອປັບປຸງຄຸນນະພາບຂອງການບໍລິການກິດຈະກຳການທ່ອງທ່ຽວທາງນ້ຳ ໃຫ້ໄດ້ມາດຕະຖານ ແລະ ມີລະບົບການຄຸ້ມຄອງທີ່ຊັດເຈນ, ຊ່ວຍເຮັດໃຫ້ທຸກພາກສ່ວນທີ່ພັດທະນາ, ບໍລິຫານຄຸ້ມຄອງ ກິດຈະກຳການທ່ອງທ່ຽວ ດັ່ງກ່າວ ມີຄວາມເຂົ້າໃຈ ແລະ  ເປັນເອກະພາບກັນ ໂດຍຖືເອົາຄວາມຕ້ອງການ ຂອງນັກທ່ອງທ່ຽວ ເປັນຕົ້ນຕໍ.
- ເພື່ອວາງແນວທາງໃນການບໍລິຫານຄຸ້ມຄອງ ກິດຈະກຳເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງໃຫ້ໄປ ຕາມ ມາດຕະຖານທີ່ໄດ້ກຳນົດໄວ້

## 1.4 ຂອບເຂດການນຳໃຊ້

ມາດຕະຖານກິດຈະກຳການທ່ອງທ່ຽວທາງນ້ຳສະບັບນີ້ ສ້າງຂຶ້ນເພື່ອໃຫ້ຜູ້ບໍລິຫານການທ່ອງທ່ຽວ ພາກລັດ ແລະ ພາກທຸລະກິດ ນຳໃຊ້ເປັນຄູ່ມືແນະນຳການສ້າງ ແລະ ພັດທະນາກິດຈະກຳການທ່ອງທ່ຽວ ທາງນ້ຳ ຢູ່ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍອີງຕາມເນື້ອໃນທີ່ໄດ້ກຳນົດໃນມາດຕະຖານສະບັບນີ້. ພາກລັດ ສາມາດໃຊ້ເປັນບ່ອນອີງໃນການຕິດຕາມ, ກວດກາ ແລະ ຄຸ້ມຄອງການບໍລິການການທ່ອງທ່ຽວ ທາງນ້ຳ ເພື່ອເຮັດໃຫ້ກິດຈະກຳການທ່ອງທ່ຽວທາງນ້ຳ ມີຄວາມປອດໄພຕໍ່ຊີວິດ ແລະ ຊັບສິນຂອງ ນັກທ່ອງທ່ຽວ.

## 1.5 ຜົນປະໂຫຍດທີ່ຈະໄດ້ຮັບ

- ຜູ້ປະກອບການດ້ານການທຸລະກິດທ່ອງທ່ຽວ ມີຄູ່ມືທີ່ໄດ້ມາດຕະຖານໃນການບໍລິຫານຄຸ້ມຄອງກິດຈະກຳ ການທ່ອງທ່ຽວ,  ຊ່ວຍໃຫ້ມີຄວາມຍືນຍົງ ທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມເທື່ອລະກ້າວ.
- ນັກທ່ອງທ່ຽວມີຄວາມໝັ້ນໃຈທາງດ້ານຄວາມປອດໄພ ເມື່ອເດີນທາງໄປທ່ອງທ່ຽວຢູ່ແຕ່ລະບ່ອນ ໂດຍໄດ້ຮັບການບໍລິການທີ່ມີຄຸນນະພາບທີ່ໄດ້ມາດຕະຖານ ເປັນການສ້າງພາບພົດທີ່ດີແກ່ການທ່ອງທ່ຽວ ລາວ.
- ປະຊາຊົນທ້ອງຖິ່ນມີສ່ວນຮ່ວມໃນການອະນຸລັກຮີດຄອງປະເພນີ, ປົກປັກຮັກສາສະພາບແວດລ້ອມ ໃຫ້ມີຄວາມອຸດົມສົມບູນຍິ່ງຂຶ້ນ.

# ພາກທີ II
# ບັນດາເງື່ອນໄຂຫຼັກສຳລັບກິດຈະກຳການທ່ອງທ່ຽວ

## 2.1 ບັນດາເງື່ອນໄຂ

### 2.1.1 ເງື່ອນໄຂສຳລັບຜູ້ປະກອບການ

ເງື່ອນໄຂສຳລັບຜູ້ປະກອບການກິດຈະກຳການທ່ອງທ່ຽວ ປະກອບມີດັ່ງນີ້:

➢ **ການດຳເນີນທຸລະກິດການທ່ອງທ່ຽວ**

- ຜູ້ປະກອບການຕ້ອງມີໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນສິ່ງແວດລ້ອມ ຈາກ ຂະແໜງການທີ່ກ່ຽວຂ້ອງ ແລະ ປະກັນໄພ ທີ່ຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- ອຸປະກອນ (ເຮືອກາຍັກ, ເຮືອຫາງຍາວ, ກົງເບັງ) ຕ້ອງໄດ້ຮັບການກວດກາທາງດ້ານເຕັກນິກ ຈາກພາກສ່ວນທີ່ກ່ຽວຂ້ອງ
- ຜູ້ປະກອບການຕ້ອງແມ່ນຄົນທີ່ບໍ່ເຄີຍຖືກດຳເນີນຄະດີໃດໆມາກ່ອນ
- ຕ້ອງໄດ້ປະກອບສ່ວນຊ່ວຍສັງຄົມໃນຮູບແບບຕ່າງໆ
- ມີການບໍລິການຫ້ອງນໍ້າ, ຫ້ອງອາບນໍ້າ/ຫ້ອງປ່ຽນເຄື່ອງທີ່ສະອາດ, ບໍ່ມີກິ່ນອັບ/ກິ່ນເໝັນ, ມີການອະນາໄມເປັນປະຈຳ ແລະ ມີລະບົບລະບາຍນໍ້າເປື້ອນ.
- ສ້າງລະບຽບການໃນການຈັດຕັ້ງປະຕິບັດກິດຈະກຳເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ.

➢ **ບຸກຄະລາກອນ**

- ພະນັກງານນຳທ່ຽວຕ້ອງແນະນຳລາຍການນຳທ່ຽວ, ໄລຍະເວລາ, ຈຸດພັກ, ຈຸດແວ່ຊົມແຫຼ່ງທ່ອງທ່ຽວ ຫຼື ອື່ນໆ.
- ພະນັກງານນຳທ່ຽວຕ້ອງລອຍນໍ້າເປັນ, ຕ້ອງເປັນຜູ້ມີຄວາມຊຳນານກ່ຽວກັບເສັ້ນທາງນໍ້າ, ຮູ້ພື້ນທີ່ເສັ້ນທາງລ່ອງເຮືອ, ຕິດຕາມ, ບໍລິການນັກທ່ອງທ່ຽວໄດ້ເປັນຢ່າງດີ.
- ພະນັກງານນຳທ່ຽວຕ້ອງສາທິດ, ແນະນຳວິທີການພາຍເຮືອ, ນຳໃຊ້ເຮືອ ແລະ ການລ່ອງກົງເບັງໃຫ້ແກ່ນັກທ່ອງທ່ຽວທຸກໆຄັ້ງ.
  - ພະນັກງານນຳທ່ຽວເຮືອກາຍັກ 01 ຄົນຕໍ່ນັກທ່ອງທ່ຽວບໍ່ເກີນ 02 ຄົນ/ເຮືອ 01 ລຳ.
  - ພະນັກງານຂັບເຮືອຈັກຫາງຍາວ 01 ຄົນຕໍ່ນັກທ່ອງທ່ຽວບໍ່ເກີນ 03 ຄົນ/ເຮືອ 01 ລຳ
  - ພະນັກງານນຳທ່ຽວກົງເບັງ 01 ຄົນຕໍ່ກຸ່ມນັກທ່ອງທ່ຽວບໍ່ເກີນ 05 ຄົນ/ 01 ກຸ່ມ.
  - ກຳນົດໄລຍະເວລາເປີດ ແລະ ປິດບໍລິການ ເລີ່ມ 6:30-18:00ໂມງ. ສຳລັບເຮືອຈັກຫາງຍາວແມ່ນໃຫ້ເປີດບໍລິການເລີ່ມແຕ່ 07:00-18:00ໂມງ.
- ຕ້ອງມີພະນັກງານໃຫ້ຄຳແນະນຳ ແລະ ທົດລອງການນຳໃຊ້ເຮືອກາຍັກ ແລະ ກົງເບັງ. ສຳລັບເຮືອຈັກຫາງຍາວ ຕ້ອງແມ່ນນັກຂັບເຮືອເປັນຜູ້ຂັບ, ບໍ່ອະນຸຍາດໃຫ້ນັກທ່ອງທ່ຽວຂັບເອງ.

- ພະນັງງານນຳທ່ຽວຕ້ອງມີຄວາມຮູ້ພື້ນຖານໃນການປະຖົມພະຍາບານເບື້ອງຕົ້ນ, ຮູ້ຈັກວິທີການກູ້ຊີບນັກທ່ອງທ່ຽວຂັ້ນຕົ້ນ. ໃນກໍລະນີເກີດເຫດສຸກເສີນຕ້ອງປະສານຫາໜ່ວຍກູ້ໄພ ຫຼື ໂຮງໝໍໃກ້ຄຽງ.
- ພະນັກງານນຳທ່ຽວຕ້ອງໄດ້ຜ່ານການຝຶກອົບຮົມວຽກງານສະເພາະດ້ານນັ້ນໆ ທັງພາກທິດສະດີ ແລະ ພາກປະຕິບັດຕົວຈິງ ໃຫ້ຊຳນານງານກ່ອນ ຈຶ່ງໃຫ້ບໍລິການແກ່ນັກທ່ອງທ່ຽວທ່ອງທ່ຽວ.
- ພະນັກງານນຳທ່ຽວຕ້ອງໃຫ້ຄຳແນະນຳ ຕໍ່ນັກທ່ອງທ່ຽວກ່ຽວກັບການນຸ່ງຖື, ສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດ ແລະ ເຄື່ອງໃຊ້ທີ່ຈຳເປັນ.
- ພະນັກງານນຳທ່ຽວ ຫລື ຜູ້ຂັບເຮືອ ຕ້ອງເປັນຜູ້ຮັບຜິດຊອບຕໍ່ຊີວິດ ແລະ ຊັບສິນທີ່ມີຄ່າຂອງນັກທ່ອງທ່ຽວຕະຫລອດ ໄລຍະທີ່ໃຫ້ການບໍລິການ.
- ພະນັກງານນຳທ່ຽວ ຫລື ຜູ້ຂັບເຮືອ ຕ້ອງເກັບມ້ຽນຂີ້ເຫຍື້ອຈາກນັກທ່ອງທ່ຽວ ໃນລະຫວ່າງການໃຫ້ບໍລິການ.

➢ **ການບໍລິຫານ ແລະ ຄຸ້ມຄອງ**

- ມີໂຄງຮ່າງການຈັດຕັ້ງ, ມີການແບ່ງໜ້າທີ່ຄວາມຮັບຜິດຊອບຢ່າງລະອຽດ ແລະ ມີລະບົບບໍລິຫານທີ່ຈະແຈ້ງ
- ພະນັງງານບໍລິການຕ້ອງໄດ້ຮັບຝຶກອົບຮົມຢ່າງເປັນປົກກະຕິ ເພື່ອເພີ່ມຄວາມຮູ້ຄວາມສາມາດ ທັນກັບຍຸກສະໄໝ
- ຜູ້ບໍລິຫານຕ້ອງມີແຜນຮັບມືກັບຄວາມສ່ຽງ, ອຸປະຕິເຫດທີ່ອາດຈະເກີດຂຶ້ນ ລວມທັງວິທີແກ້ໄຂ.
- ມີການຕິດຕາມກວດກາຢ່າງເປັນປົກກະຕິຂອງພະນັກງານບໍລິຫານຄຸ້ມຄອງ ຕ້ອງມີປະສົບການໃນການບໍລິຫານ ຫຼື ວຽກງານທີ່ກ່ຽວຂ້ອງ, ມີຄວາມຮູ້ຄວາມສາມາດທີ່ແນ່ນອນ ແລະ ມີຈັນຍາບັນໃນການເຮັດວຽກ.

➢ **ການຄຸ້ມຄອງສິ່ງແວດລ້ອມ**

- ຕ້ອງມີລະບຽບການກ່ຽວກັບການຮັກສາສິ່ງແວດລ້ອມ, ແນະນຳນັກທ່ອງທ່ຽວໃຫ້ມີສ່ວນຮ່ວມໃນການປົກປັກຮັກສາສິ່ງແວດລ້ອມໃນເວລາຈັດຕັ້ງປະຕິບັດກິດຈະກຳ.
- ຢູ່ເຂດບໍລິການ ຕ້ອງຈັດວາງຖັງຂີ້ເຫຍື້ອແບບແຍກປະເພດ 3 ຖັງ ໃຫ້ພຽງພໍ ແລະ ເໝາະສົມ ເຊັ່ນ: ປະເພດຂີ້ເຫຍື້ອທົ່ວໄປ, ປະເພດຂີ້ເຫຍື້ອປຽກ ແລະ ປະເພດຂີ້ເຫຍື້ອນຳມາຜະລິດໃຊ້ຄືນໄດ້.

➢ **ການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ**

- ປະຊາຊົນທ້ອງຖິ່ນຕ້ອງມີສ່ວນຮ່ວມໃນການປຶກສາຫາລື, ການວາງແຜນ, ການບໍລິການ, ການຄຸ້ມຄອງ, ການຕັດສິນບັນຫາ ແລະ ການແບ່ງປັນຜົນປະໂຫຍດດ້ວຍຄວາມເປັນທຳ.
- ປະຊາຊົນຕ້ອງຖິ່ນ ຕ້ອງເປັນເຈົ້າການໃຫ້ຄຳຄິດຄຳເຫັນ ໃນທາງທີ່ສ້າງສັນຕໍ່ພາກສ່ວນກ່ຽວຂ້ອງ ຖ້າຫາກພົບເຫັນປະກົດການຫຍໍ້ທໍ້ ດ້ວຍກໍລະນີຕ່າງໆ.

### 2.1.2 ເງື່ອນໄຂການກຳນົດພື້ນທີ່ໃຫ້ບໍລິການ

➢ **ການກຳນົດຂອບເຂດພື້ນທີ່**

- ຕ້ອງກຳນົດເສັ້ນທາງການລ່ອງເຮືອທີ່ຈະແຈ້ງ ເພື່ອສ້າງເປັນວົງຈອນການທ່ອງທ່ຽວທາງນ້ຳ ລວມທັງ ກຳນົດຈຸດຂຶ້ນ-ລົງ ໃຫ້ມີຄວາມເໝາະສົມ.
- ສ້າງແຜນທີເສັ້ນທາງລ່ອງເຮືອ, ກຳນົດຈຸດແວ່ພັກ, ຈຸດໃຫ້ບໍລິການກິດຈະກຳຕ່າງໆ ໂດຍການກຳນົດ ໄລຍະທາງ, ເວລາ ແລະ ໄດ້ຮັບການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ.

➢ **ສິ່ງອຳນວຍຄວາມສະດວກ**

- ຜູ້ປະກອບການຕ້ອງມີພາຫະນະຂົນສົ່ງນັກທ່ອງທ່ຽວ ທີ່ຢູ່ໃນສະພາບດີ, ມີຄວາມສະອາດ, ໄດ້ຜ່ານການກວດກາເຕັກນິກຢ່າງເປັນປົກກະຕິ.
- ຜູ້ປະກອບການຕ້ອງມີອຸປະກອນຮັບໃຊ້ທີ່ພຽງພໍ, ມີຄຸນນະພາບ ແລະ ຢູ່ໃນສະພາບທີ່ດີ ເຊັ່ນ: ເສື້ອຊູຊີບ, ໄມ້ພາຍເຮືອ, ຖົງກັນນ້ຳ, ໝວກກັນກະທົບ, ເຊືອກຜູກເຮືອ ແລະ ອຸປະກອນອື່ນໆທີ່ຈຳເປັນ.
- ອຳນວຍຄວາມສະດວກ ໃຫ້ແກ່ກຸ່ມນັກທ່ອງທ່ຽວຜູ້ທີ່ສູງອາຍຸ ແລະ ເດັກນ້ອຍ ພ້ອມທັງໃຫ້ການບໍລິການ ອື່ນໆ ເປັນພິເສດ.
- ສຳລັບຂີ່ກົງເບັງແມ່ນຫ້າມບໍ່ໃຫ້ເດັກນ້ອຍອາຍຸຕ່ຳກວ່າ 15 ປີ (ໃຊ້ບໍລິການ)
- ສຳລັບຂີ່ເຮືອກາຍັກ ແລະ ເຮືອຈັກຫາງຍາວແມ່ນຫ້າມບໍ່ໃຫ້ເດັກນ້ອຍອາຍຸຕ່ຳກວ່າ 5 ປີ (ໃຊ້ບໍລິການ)
- ມີຄູ່ມືແນະນຳການນຳໃຊ້ເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ ພ້ອມດ້ວຍກົດລະບຽບ ແລະ ຄວາມປອດໄພຕ່າງໆ ເພື່ອແຈກຢາຍໃຫ້ແກ່ນັກທ່ອງທ່ຽວ.

➢ **ຄວາມປອດໄພ**

- ກຸ່ມບໍລິການກິດຈະກຳເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ ຕ້ອງຮັບປະກັນຄວາມປອດໄພທາງ ດ້ານສຸຂະພາບ ແລະ ຊີວິດຂອງນັກທ່ອງທ່ຽວ ໃນທຸກກໍລະນີ.
- ມີອຸປະກອນກູ້ໄພ ແລະ ມີຢາແຮສຸກເສີນ ເພື່ອປະຖົມພະຍາບານຂັ້ນຕົ້ນ.
- ຕ້ອງມີການກວດກາອຸປະກອນເປັນປະຈຳ ແລະ ມີການບັນທຶກ, ໂດຍສະເພາະການນຳເອົາອຸປະກອນ ອອກໄປບໍລິການໃຫ້ນັກທ່ອງທ່ຽວ ເຊັ່ນ: ບໍ່ໃຫ້ເຮືອຮົ່ວ, ເຄື່ອງຈັກແລ່ນໄດ້ດີ..... ຖ້າຫາກອຸປະກອນເປ່ເພ ຕ້ອງໄດ້ມີການປ່ຽນຖ່າຍ ແລະ ສ້ອມແປງຄືນໃໝ່ ຈຶ່ງສາມາດໃຫ້ບໍລິການໄດ້.

### 2.1.3 ເງື່ອນໄຂສຳລັບນັກທ່ອງທ່ຽວ

- ແນະນຳໃຫ້ນັກທ່ອງທ່ຽວຮັບຊາບກ່ຽວກັບກົດລະບຽບ, ຂໍ້ຫ້າມ, ສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດ ກ່ອນຈັດຕັ້ງປະຕິບັດກິດຈະກຳເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ.
- ນັກທ່ອງທ່ຽວຕ້ອງປະຕິບັດຕາມກົດລະບຽບທີ່ກຳນົດໄວ້ ແລະ ຄຳແນະນຳຂອງພະນັກງານນຳທ່ຽວ.
- ນັກທ່ອງທ່ຽວຕ້ອງປະກອບສ່ວນໃນການປົກປັກຮັກສາສິ່ງແວດລ້ອມ, ຄວາມສະອາດຂອງແມ່ນ້ຳ ແລະ ຮັກສາຊັບພະຍາກອນທຳມະຊາດ ແລະ ອຸປະກອນຕ່າງໆ.
- ໃຫ້ນັກທ່ອງທ່ຽວມີສ່ວນຮ່ວມປະກອບສ່ວນໃນການປະກອບຄຳຄິດເຫັນ ແລະ ຄວາມເພິ່ງພໍໃຈຕໍ່ ການບໍລິການ.

## 2.2 ການປະເມີນບັນດາເງື່ອນໄຂ ແລະ ເກນໃຫ້ຄະແນນ

**ຕາຕະລາງມາດຕະຖານ (ເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ)**

| | ບັນດາເງື່ອນໄຂ | ມີ | ບໍ່ມີ |
|---|---|---|---|
| 1.1 | ❖ ການດຳເນີນທຸລະກິດການທ່ອງທ່ຽວ (6) | | |
| 1 | ຜູ້ປະກອບການຕ້ອງມີໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນສິ່ງແວດລ້ອມ ຈາກຂະແໜງການທີ່ກ່ຽວຂ້ອງ ແລະ ປະກັນໄພ ທີ່ຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ | | |
| 2 | ອຸປະກອນ (ເຮືອກາຍັກ, ເຮືອຫາງຍາວ, ກົງເບັງ) ຕ້ອງໄດ້ຮັບການກວດກາທາງດ້ານເຕັກນິກ ຈາກພາກສ່ວນທີ່ກ່ຽວຂ້ອງ | | |
| 3 | ຜູ້ປະກອບການຕ້ອງແມ່ນຄົນທີ່ບໍ່ເຄີຍຖືກດຳເນີນຄະດີໃດໆມາກ່ອນ | | |
| 4 | ຕ້ອງໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມໃນຮູບແບບຕ່າງໆ | | |
| 5 | ມີການບໍລິການຫ້ອງນ້ຳ, ຫ້ອງອາບນ້ຳ/ຫ້ອງປ່ຽນເຄື່ອງທີ່ສະອາດ, ບໍ່ມີກິ່ນອັບ/ກິ່ນເໝັນ, ມີການອະນາໄມເປັນປະຈຳ ແລະ ມີລະບົບລະບາຍນ້ຳເປື້ອນ. | | |
| 6 | ສ້າງລະບຽບການໃນການຈັດຕັ້ງປະຕິບັດກິດຈະກຳເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ. | | |
| 1.2 | ❖ ບຸກຄະລາກອນ (8) | | |
| 1 | ພະນັກງານນຳທ່ຽວຕ້ອງແນະນຳລາຍການນຳທ່ຽວ, ໄລຍະເວລາ, ຈຸດພັກ, ຈຸດແວ່ຊົມແຫຼ່ງທ່ອງທ່ຽວ ຫຼື ອື່ນໆ. | | |
| 2 | ພະນັກງານນຳທ່ຽວຕ້ອງລອຍນ້ຳເປັນ, ຕ້ອງເປັນຜູ້ມີຄວາມຊຳນານກ່ຽວກັບເສັ້ນທາງນ້ຳ, ຮູ້ພື້ນທີ່ ເສັ້ນທາງລ່ອງເຮືອ, ຕິດຕາມ, ບໍລິການນັກທ່ອງທ່ຽວໄດ້ເປັນຢ່າງດີ. | | |
| 3 | ພະນັກງານນຳທ່ຽວຕ້ອງສາທິດ, ແນະນຳວິທີການພາຍເຮືອ, ນຳໃຊ້ເຮືອ ແລະ ການລ່ອງກົງເບັງໃຫ້ແກ່ນັກທ່ອງທ່ຽວທຸກໆຄັ້ງ.<br>• ພະນັກງານນຳທ່ຽວເຮືອກາຍັກ 01 ຄົນຕໍ່ນັກທ່ອງທ່ຽວບໍ່ເກີນ 02 ຄົນ/ເຮືອ 01 ລຳ.<br>• ພະນັກງານຂັບເຮືອຈັກຫາງຍາວ 01 ຄົນຕໍ່ນັກທ່ອງທ່ຽວບໍ່ເກີນ 03 ຄົນ/ເຮືອ 01 ລຳ<br>• ພະນັກງານນຳທ່ຽວກົງເບັງ 01 ຄົນຕໍ່ກຸ່ມນັກທ່ອງທ່ຽວບໍ່ເກີນ 05 ຄົນ/ 01 ກຸ່ມ.<br>• ກຳນົດໄລຍະເວລາເປີດ ແລະ ປິດບໍລິການ ເລີ່ມ 6:30-18:00ໂມງ. ສຳລັບເຮືອຈັກຫາງຍາວ ແມ່ນໃຫ້ເປີດບໍລິການເລີ່ມແຕ່ 07:00-18:00ໂມງ. | | |
| 4 | ຕ້ອງມີພະນັກງານໃຫ້ຄຳແນະນຳ ແລະ ທົດລອງການນຳໃຊ້ເຮືອກາຍັກ ແລະ ກົງເບັງ. ສຳລັບເຮືອຈັກຫາງຍາວ ຕ້ອງແມ່ນນັກຂັບເຮືອເປັນຜູ້ຂັບ, ບໍ່ອະນຸຍາດໃຫ້ນັກທ່ອງທ່ຽວຂັບເອງ. | | |
| 5 | ພະນັກງານນຳທ່ຽວຕ້ອງໄດ້ຜ່ານການຝຶກອົບຮົມວຽກງານສະເພາະດ້ານນັ້ນໆ ທັງພາກທິດສະດີ ແລະ ພາກປະຕິບັດຕົວຈິງ ໃຫ້ຊຳນານງານກ່ອນ ຈຶ່ງໃຫ້ບໍລິການແກ່ນັກທ່ອງທ່ຽວທ່ອງທ່ຽວ. | | |
| 6 | ພະນັກງານນຳທ່ຽວຕ້ອງໃຫ້ຄຳແນະນຳ ຕໍ່ນັກທ່ອງທ່ຽວກ່ຽວກັບການນຸ່ງຖື, ສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດ ແລະ ເຄື່ອງໃຊ້ທີ່ຈຳເປັນ. | | |
| 7 | ພະນັກງານນຳທ່ຽວ ຫລື ຜູ້ຂັບເຮືອ ຕ້ອງເປັນຜູ້ຮັບຜິດຊອບຕໍ່ຊີວິດ ແລະ ຊັບສິນທີ່ມີຄ່າຂອງ ນັກທ່ອງທ່ຽວຕະຫລອດໄລຍະທີ່ໃຫ້ການບໍລິການ. | | |
| 8 | ພະນັກງານນຳທ່ຽວ ຫລື ຜູ້ຂັບເຮືອ ຕ້ອງເກັບມ້ຽນຂີ້ເຫຍື້ອຈາກນັກທ່ອງທ່ຽວ ໃນລະຫວ່າງການ ໃຫ້ບໍລິການ. | | |

| | | | |
|---|---|---|---|
| 1.3 | ❖ **ການບໍລິຫານ ແລະ ຄຸ້ມຄອງ (4)** | | |
| 1 | ມີໂຄງຮ່າງການຈັດຕັ້ງ, ມີການແບ່ງໜ້າທີ່ຄວາມຮັບຜິດຊອບຢ່າງລະອຽດ ແລະ ມີລະບົບບໍລິຫານທີ່ຈະແຈ້ງ | | |
| 2 | ພະນັງານບໍລິການຕ້ອງໄດ້ຮັບຝຶກອົບຮົມຢ່າງເປັນປົກກະຕິ ເພື່ອເພີ່ມຄວາມຮູ້ຄວາມສາມາດ ທັນກັບຍຸກສະໄໝ | | |
| 3 | ຜູ້ບໍລິຫານຕ້ອງມີແຜນຮັບມືກັບຄວາມສ່ຽງ, ອຸປະຕິເຫດທີ່ອາດຈະເກີດຂຶ້ນ ລວມທັງວິທີແກ້ໄຂ. | | |
| 4 | ມີການຕິດຕາມກວດກາຢ່າງເປັນປົກກະຕິຂອງພະນັກງານບໍລິຫານຄຸ້ມຄອງ ຕ້ອງມີປະສົບການໃນການບໍລິຫານ ຫຼື ວຽກງານທີ່ກ່ຽວຂ້ອງ, ມີຄວາມຮູ້ຄວາມສາມາດທີ່ແນ່ນອນ ແລະ ມີຈັນຍາບັນໃນການເຮັດວຽກ. | | |
| 1.4 | ❖ **ການຄຸ້ມຄອງສິ່ງແວດລ້ອມ (2)** | | |
| 1 | ຕ້ອງມີລະບຽບການກ່ຽວກັບການຮັກສາສິ່ງແວດລ້ອມ, ແນະນຳນັກທ່ອງທ່ຽວໃຫ້ມີສ່ວນຮ່ວມ ໃນການປົກປັກຮັກສາສິ່ງແວດລ້ອມໃນເວລາຈັດຕັ້ງປະຕິບັດກິດຈະກຳ. | | |
| 2 | ຢູ່ເຂດບໍລິການ ຕ້ອງຈັດວາງຖັງຂີ້ເຫຍື້ອແບບແຍກປະເພດ 3 ຖັງ ໃຫ້ພຽງພໍ ແລະ ເໝາະສົມ ເຊັ່ນ: ປະເພດຂີ້ເຫຍື້ອທົ່ວໄປ, ປະເພດຂີ້ເຫຍື້ອປຽກ ແລະ ປະເພດຂີ້ເຫຍື້ອນຳມາຜະລິດໃຊ້ຄືນໄດ້. | | |
| 1.5 | ❖ **ການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ (2)** | | |
| 1 | ປະຊາຊົນທ້ອງຖິ່ນຕ້ອງມີສ່ວນຮ່ວມໃນການປົກສາຫາລື, ການວາງແຜນ, ການບໍລິການ, ການຄຸ້ມຄອງ, ການຕັດສິນບັນຫາ ແລະ ການແບ່ງປັນຜົນປະໂຫຍດດ້ວຍຄວາມເປັນທຳ. | | |
| 2 | ປະຊາຊົນຕ້ອງຖິ່ນ ຕ້ອງເປັນເຈົ້າການໃຫ້ຄຳຄິດຄຳເຫັນ ໃນທາງທີ່ສ້າງສັນຕໍ່ພາກສ່ວນກ່ຽວຂ້ອງ ຖ້າຫາກພົບເຫັນປະກົດການຫຍໍ້ທໍ້ ດ້ວຍກົລະນີຕ່າງໆ. | | |
| 1.6 | ➢ **ການກຳນົດຂອບເຂດພື້ນທີ່ (2)** | | |
| 1 | ຕ້ອງກຳນົດເສັ້ນທາງການລ່ອງເຮືອທີ່ຈະແຈ້ງ ເພື່ອສ້າງເປັນວົງຈອນການທ່ອງທ່ຽວທາງນໍ້າ ລວມທັງກຳນົດຈຸດຂຶ້ນ-ລົງ ໃຫ້ມີຄວາມເໝາະສົມ. | | |
| 2 | ສ້າງແຜນທີເສັ້ນທາງລ່ອງເຮືອ, ກຳນົດຈຸດແວ່ພັກ, ຈຸດໃຫ້ບໍລິການກິດຈະກຳຕ່າງໆ ໂດຍການກຳນົດ ໄລຍະທາງ, ເວລາ ແລະ ໄດ້ຮັບການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ. | | |
| 1.7 | ➢ **ສິ່ງອຳນວຍຄວາມສະດວກ (6)** | | |
| 1 | ຜູ້ປະກອບການຕ້ອງມີພາຫະນະຂົນສົ່ງນັກທ່ອງທ່ຽວ ທີ່ຢູ່ໃນສະພາບດີ, ມີຄວາມສະອາດ, ໄດ້ຜ່ານການກວດກາເຕັກນິກຢ່າງເປັນປົກກະຕິ. | | |
| 2 | ຜູ້ປະກອບການຕ້ອງມີອຸປະກອນຮັບໃຊ້ທີ່ພຽງພໍ, ມີຄຸນນະພາບ ແລະ ຢູ່ໃນສະພາບທີ່ດີ ເຊັ່ນ: ເສື້ອຊູຊີບ, ໄມ້ພາຍເຮືອ, ຖົງກັນນໍ້າ, ໝວກກັນກະທົບ, ເຊືອກຜູກເຮືອ ແລະ ອຸປະກອນອື່ນໆທີ່ຈຳເປັນ. | | |
| 3 | ອຳນວຍຄວາມສະດວກ ໃຫ້ແກ່ກຸ່ມນັກທ່ອງທ່ຽວຜູ້ທີ່ສູງອາຍຸ ແລະ ເດັກນ້ອຍ ພ້ອມທັງໃຫ້ການບໍລິການອື່ນໆ ເປັນພິເສດ. | | |
| 4 | ສຳລັບຂີ່ກິ້ງເບັງແມ່ນຫ້າມບໍ່ໃຫ້ເດັກນ້ອຍອາຍຸຕໍ່າກວ່າ 15 ປີ (ໃຊ້ບໍລິການ) | | |
| 5 | ສຳລັບຂີ່ເຮືອກາຍັກ ແລະ ເຮືອຈັກຫາງຍາວແມ່ນຫ້າມບໍ່ໃຫ້ເດັກນ້ອຍອາຍຸຕໍ່າກວ່າ 5 ປີ (ໃຊ້ບໍລິການ) | | |

| | | | |
|---|---|---|---|
| 6 | ມີຄູ່ມືແນະນຳການນຳໃຊ້ເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ ພ້ອມດ້ວຍກົດລະບຽບ ແລະ ຄວາມປອດໄພຕ່າງໆ ເພື່ອແຈກຢາຍໃຫ້ແກ່ນັກທ່ອງທ່ຽວ. | | |
| 1.8 | ➢ **ຄວາມປອດໄພ (3)** | | |
| 1 | ກຸ່ມບໍລິການກິດຈະກຳເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ ຕ້ອງຮັບປະກັນຄວາມປອດໄພທາງດ້ານສຸຂະພາບ ແລະ ຊີວິດຂອງນັກທ່ອງທ່ຽວ ໃນທຸກກໍລະນີ. | | |
| 2 | ມີອຸປະກອນກູ້ໄພ, ຢາແຮສຸກເສີນ ເພື່ອປະຖົມພະຍາບານຂັ້ນຕົ້ນ. | | |
| 3 | ຕ້ອງມີການກວດກາອຸປະກອນເປັນປະຈຳ ແລະ ມີການບັນທຶກ, ໂດຍສະເພາະການນຳເອົາອຸປະກອນອອກໄປບໍລິການໃຫ້ນັກທ່ອງທ່ຽວ ເຊັ່ນ: ບໍ່ໃຫ້ເຮືອຮົ່ວ, ເຄື່ອງຈັກແລ່ນໄດ້ດີ..... ຖ້າຫາກອຸປະກອນເປ່ເພ່ຕ້ອງໄດ້ມີການປ່ຽນຖ່າຍ ແລະ ສ້ອມແປງຄືນໃໝ່ ຈຶ່ງສາມາດໃຫ້ບໍລິການໄດ້. | | |
| 1.9 | ➢ **ເງື່ອນໄຂສຳລັບນັກທ່ອງທ່ຽວ (4)** | | |
| 1 | ແນະນຳໃຫ້ນັກທ່ອງທ່ຽວຮັບຊາບກ່ຽວກັບກົດລະບຽບ, ຂໍ້ຫ້າມ, ສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດກ່ອນຈັດຕັ້ງປະຕິບັດກິດຈະກຳເຮືອກາຍັກ, ເຮືອຈັກຫາງຍາວ ແລະ ກົງເບັງ. | | |
| 2 | ນັກທ່ອງທ່ຽວຕ້ອງປະຕິບັດຕາມກົດລະບຽບທີ່ກຳນົດໄວ້ ແລະ ຄຳແນະນຳຂອງພະນັກງານນຳທ່ຽວ. | | |
| 3 | ນັກທ່ອງທ່ຽວຕ້ອງປະກອບສ່ວນໃນການປົກປັກຮັກສາສິ່ງແວດລ້ອມ, ຄວາມສະອາດຂອງແມ່ນ້ຳ ແລະ ຮັກສາຊັບພະຍາກອນທຳມະຊາດ ແລະ ອຸປະກອນຕ່າງໆ. | | |
| 4 | ໃຫ້ນັກທ່ອງທ່ຽວມີສ່ວນຮ່ວມປະກອບສ່ວນໃນການປະກອບຄຳຄິດເຫັນ ແລະ ຄວາມເພິ່ງພໍໃຈຕໍ່ການບໍລິການ. | | |
| | **ລວມຄະແນນທັງໝົດມີ 37 ຄະແນນ** | | |

➢ **ວິທີຄິດໄລ່ຄະແນນ**

- ສຳລັບການໃຫ້ຄະແນນ ແມ່ນທາງບັນດາຄະນະກຳມະການຂັ້ນສູນກາງ ແລະ ຂັ້ນແຂວງ ຈະໄດ້ໃສ່ເຄື່ອງໝາຍ (√) ໃສ່ໃນຫ້ອງ "ມີ" ຈຶ່ງຈະໄດ້ຄະແນນ ຖືວ່າຜ່ານມາດຕະຖານກິດຈະກຳການທ່ອງທ່ຽວນ້ຳ.
- ໝາຍເຫດ: ບາງຄຳຖາມອາດຈະຕອບ "ບໍ່ມີ" ແຕ່ບໍ່ໝາຍຄວາມວ່າບໍ່ໄດ້ຄະແນນ (ອີງໃສ່ຮູບແບບຄຳຖາມ)

➢ **ການຈັດເກນໃຫ້ຄະແນນ**

- ມາດຕະຖານສະບັບນີ້ມີທັງໝົດ 37 ເງື່ອນໄຂ ຫຼື ເທົ່າກັບ 37 ຄະແນນ (100 ເປີເຊັນ)
- ບັນດາແຂວງ/ຜູ້ປະກອບການສະຖານທີ່ທ່ອງທ່ຽວທາງນ້ຳ ທີ່ໄດ້ຄະແນນຢ່າງໜ້ອຍ 25 ຄະແນນຂຶ້ນໄປ ຫຼື 70% ຂອງຄະນະລວມທັງໝົດຈຶ່ງຈະໄດ້ຮັບການຢັ້ງຢືນມາດຕະຖານກິດຈະກຳການທ່ອງທ່ຽວທາງນ້ຳ.
- ບັນດາແຂວງ/ຜູ້ປະກອບການ ຈະໄດ້ຮັບໃບຢັ້ງຢືນ ແລະ ແຜ່ນປ້າຍມາດຕະຖານ

## 2.3 ການອອກໃບຢັ້ງຢືນ

- ການຢັ້ງຢືນຈະໄດ້ຖືກດຳເນີນໂດຍ ຄະນະກຳການປະເມີນມາດຕະຖານກິດຈະກຳການທ່ອງທ່ຽວທາງນ້ຳ (ຂັ້ນແຂວງ ຫລື ເມືອງ) ທີ່ໄດ້ຮັບການແຕ່ງຕັ້ງ.

- ພາກທຸລະກິດ/ຜູ້ປະກອບການ ເຫັນວ່າມີເງື່ອນໄຂ ສາມາດນຳສະເໜີ ເພື່ອສະເໜີຂໍການຮັບຮອງ ແລະ ຍັ້ງຢືນມາດຕະຖານ
- ຄະນະກຳມະການມາດຕະຖານກິດຈະກຳການທ່ອງທ່ຽວທາງນ້ຳ ຂັ້ນແຂວງ ຈະໄດ້ລົງກວດການ ແລະ ປະເມີນ
- ຄະນະກຳມະການມາດຕະຖານກິດຈະກຳທາງນ້ຳ ຂັ້ນແຂວງ ສ້າງບົດລາຍງານ ແລະ ຮັບຮອງເອົາຜົນການປະເມີນ
- ພາຍຫຼັງກິດຈະກຳການທ່ອງທ່ຽວທາງນ້ຳ ທີ່ໄດ້ຕາມມາດຕະຖານ ແລະ ໄດ້ເງື່ອນໄຂຄົບຖ້ວນແລ້ວ, ຄະນະກຳມະ ການຂັ້ນແຂວງຈະໄດ້ອອກໃບຢັ້ງຢືນ ແລະ ແຜນປ້າຍມາດຕະຖານ.
- ໄລຍະເວລາຂອງໃບຢັ້ງຢືນກຳນົດ 2 ປີ

# ພາກທີ III

# ມາດຕະການໃນການຈັດຕັ້ງປະຕິບັດ, ນະໂຍບາຍ, ມາດຕະການຕໍ່ຜູ້ລະເມີດ

ມາດຕະຖານກິດຈະກຳການທ່ອງທ່ຽວ ສະບັບນີ້ ຕ້ອງເຜີຍແຜ່ໃຫ້ພາກສ່ວນຕ່າງໆ ທັງພາກລັດ, ພາກທຸລະກິດທີ່ກ່ຽວ ຂ້ອງຢູ່ຂັ້ນແຂວງ ແລະ ຂັ້ນທ້ອງຖິ່ນຮັບຮູ້ຢ່າງກ້ວາງຂວາງ ແລະ ເລີກເຊິ່ງດ້ວຍຫຼາຍຮູບແບບ.

## 3.1 ຂໍ້ຫ້າມ

1. ຫ້າມສວຍໂອກາດເອົາໜ່ວຍບໍລິການທ່ອງທ່ຽວ ເປັນບ່ອນຄ້າຂາຍຜິດກົດໝາຍ, ມົ່ວສຸມ, ຄ້າປະເວນີ, ສິ່ງເສບຕິດ, ຫຼີ້ນການພະນັນ, ຈັດຕັ້ງຊຸມນຸມທາງການເມືອງ ທີ່ຜິດຕໍ່ລະບຽບກົດໝາຍຢ່າງເດັດຂາດ.
2. ຫ້າມນຳພານັກທ່ອງທ່ຽວໄປທ່ອງທ່ຽວໂດຍບໍ່ໄດ້ຮັບອະນຸຍາດ.
3. ຫ້າມໜ່ວຍບໍລິການການທ່ອງທ່ຽວ ສວຍໂອກາດຂຶ້ນ ຫຼື ລົງລາຄາຄ່າບໍລິການຕາມໃຈນັກທ່ອງທ່ຽວໃນເທດສະການ, ງານບຸນຕ່າງໆ ເຊັ່ນ: ບຸນປີໃໝ່ລາວ ແລະ ອື່ນໆ ສະມາຊິກທຸກຄົນຕ້ອງປະຕິບັດຕາມລາຄາທີ່ໄດ້ ຕົກລົງເຫັນດີເປັນເອກະພາບ ກັນພາຍໃນກຸ່ມ.
4. ຫ້າມໜ່ວຍບໍລິການໃດໆ ບຸກຄົນໃດສ້າງຄວາມແຕກແຍກ, ເຮັດໃຫ້ມີຂໍ້ຂັດແຍ່ງຕ່າງໆເກີດຂຶ້ນພາຍໃນກຸ່ມ ຫຼື ສະມາຊິກໂດຍເດັດຂາດ.

## 3.2 ການແກ້ໄຂຂໍ້ຂັດແຍ່ງ

ຄະນະກຳມະການ ແລະ ສະມາຊິກທຸກຄົນໃນແຕ່ລະກຸ່ມໃນກໍລະນີເກີດຂໍ້ຂັດແຍ່ງພາຍໃນກຸ່ມ ຫລື ພາຍນອກຄະນະກຳມະການການປະເມີນຜົນຂອງແຂວງ, ເມືອງຕ້ອງໄດ້ຮັບຜິດຊອບສືບ ຫາຂໍ້ມູນ ທີ່ໄປທີ່ມາ ຂອງບັນຫາເພື່ອມາປຶກສາຫາລື ແລະ ຊອກທາງອອກໃນການແກ້ໄຂຂໍ້ຂັດແຍ່ງ ໃຫ້ສອດ ຄ່ອງກັບລະບຽບກົດໝາຍຂອງບ້ານເມືອງ.

ໃນກໍລະນີການໄກ່ເກ່ຍບັນຫາຕ່າງໆ ຖ້າບໍ່ສາມາດແກ້ໄຂໄດ້ໃນຂັ້ນບ້ານ, ກຸ່ມ, ເມືອງ ໃຫ້ສະເໜີໃຫ້ຂັ້ນແຂວງ ເພື່ອຊອກວິທີການ ຫລື ມາດຕະການຂັ້ນເດັດຂາດ ເພື່ອເປັນຕົວຢ່າງແກ່ການຈັດຕັ້ງປະຕິບັດວຽກງານຕໍ່ໄປ.

## 3.3 ນະໂຍບາຍຕໍ່ຜູ້ມີຜົນງານ

ຄະນະບໍລິຫານງານ ແລະ ສະມາຊິກທຸກຄົນໃນແຕ່ລະກຸ່ມທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດລະບຽບຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຈາກຂັ້ນຕ່າງໆ ຕາມຄວາມເໝາະສົມເປັນຕົ້ນ ໄດ້ຮັບສິດທີໃນໂຄສະນາໃນເວັບໄຊການທ່ອງທ່ຽວຂອງແຂວງ, ໂຄສະນາຜ່ານສື່ປະເພດຕ່າງໆ, ຝຶກອົບຮົມກ່ຽວກັບວຽກທ່ອງທ່ຽວ ແລະ ທັດສະນະສຶກສາຢູ່ພາຍໃນ ແລະ ຕ່າງປະເທດ.

## 3.4 ມາດຕະການຕໍ່ຜູ້ະເມີດ

ສະມາຊິກຄົນໃດຫາກລະເມີດຕໍ່ມາດຕະຖານກິດຈະກຳການທ່ອງທ່ຽວ ສະບັບນີ້ຈະຖືກປະຕິບັດວິໄນດັ່ງນີ້:

– ຄັ້ງທີ່ 1 ຈະຖືກສຶກສາອົບຮົມ, ຕັກເຕືອນ ແລະ ຂຽນໃບສຳຫຼວດພາຍໃນກຸ່ມ

- ຄັ້ງທີ 2 ຂຽນໃບສຳຫຼວດ ແລະ ປັບໃໝ 2,000,000 ກີບ (ໜຶ່ງລ້ານກີບ)
- ຄັ້ງທີ 3: ປັບໃໝ 4,000,000 ກີບ (ສອງລ້ານກີບ) ພ້ອມທັງຂຽນໃບປະຕິຍານຕົນ
- ຄັ້ງທີ 4: ຖືກປັບໃໝ 5,000,000 ກີບ (ສາມລ້ານກີບ) ຢຸດຕິກິດຈະການ, ຖອນໃບອະນຸຍາດ ແລະ ສົ່ງຟ້ອງຂຶ້ນ ສານຕາມລະບຽບກົດໝາຍ.
- ຖ້າຫາພາກສ່ວນໃດ, ສະຖານທີ່ທ່ອງທ່ຽວໃດ  ບໍ່ຈັດຕັ້ງປະຕິບັດມາດຕະຖານສະບັບນີ້ ພະແນກ ຖວທ ແຂວງ, ເມືອງ ຈະບໍ່ຕໍ່ໃບອະນຸຍາດໃນການດຳເນີນທູລະກິດ.

## ເອກະສານຊ້ອນທ້າຍ

**ຕາຕະລ່າງສັງລວມລາຍຊື່ສະຖານທີ່ທ່ອງທ່ຽວທີ່ມີການບໍລິການກິດຈະກຳການທ່ອງທ່ຽວນ້ຳຢູ່ ສປປ ລາວ**

| ລ/ດ | ສະຖານທີ່ທ່ອງທ່ຽວທີ່ມີການບໍລິການກິດຈະກຳການທ່ອງທ່ຽວ | ແຂວງ |
|---|---|---|
| 1. | ນ້ຳຊອງ, ເມືອງວັງວຽງ | ວຽງຈັນ |
| 2. | ນ້ຳລິກ, ເມືອງຫີນເຫີບ | ວຽງຈັນ |
| 3. | ອ່າງນ້ຳງື່ມ | ວຽງຈັນ |
| 4. | ນ້ຳຂອງ ເມືອງຂວາ | ຜົ້ງສາລີ |
| 5. | ວັງນ້ຳເຢັນ, ບ້ານນາປ່າຫວ້ານ | ບໍລິຄຳໄຊ |
| 6. | ນ້ຳທ້າ, ເມືອງຫລວງນ້ຳທາ | ຫຼວງນ້ຳທາ |
| 7. | ນ້ຳຂອງ, ປາກແບ່ງ | ອຸດົມໄຊ |
| 8. | ນ້ຳຂອງ ເມືອຫຼວງພະບາງ | ຫຼວງພະບາງ |
| 9. | ນ້ຳຂອງ ເມືອງງອຍ | ຫຼວງພະບາງ |
| 10. | ຕາມລຳແມ່ນ້ຳຂອງເຊັ່ນ: ຕົວເມືອງຫຼວງພະບາງ, ເມືອງປາກອູ ແລະ ເມືອງຈອມເພັດ | ຫຼວງພະບາງ |
| 11. | ຖ້ຳກອງລໍ, ເມືອງຄູນຄຳ | ຄຳມ່ວນ |
| 12. | ທ່າຝຣັ່ງ | ຄຳມ່ວນ |
| 13. | ຕາມລຳແມ່ນ້ຳຂອງ: ດອນແດງ, ດອນເດດ-ດອນຄອນ, ດອນໂຂງ ແລະ ດອນອື່ນໆ | ຈຳປາສັກ |

# ຄະນະຮັບຜິດຊອບສ້າງມາດຕະຖານກິດຈະກຳການທ່ອງທ່ຽວທາງນ້ຳ

ຄະນະຊີ້ນຳລວມ:

ທ່ານ ປອ ອາລຸນ ບຸນມີໄຊ ຫົວໜ້າກົມພັດທະນາການທ່ອງທ່ຽວ
ທ່ານ ທະວີເພັດ ອຸລາ ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ
ທ່ານ ນາງ ພອນມະລີ ອິນທະພົມ ຮອງຫົວນ້າກົມພັດທະນາການທ່ອງທ່ຽວ

ຄະນະຄົ້ນຄວ້າ ແລະ ຮຽບຮຽງ

ທ່ານ ສົມໄຊ ສີປະເສີດ ຫົວໜ້າພະແນກວາງແຜນ ແລະ ພັດທະນາການທ່ງທ່ຽວ
ທ່ານ ນາງ ຈຳພອນ ວົງສາ ຮອງຫົວໜ້າພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ
ທ່ານ ນາງ ພອນມະນີ ສຸຂະທຳມະວົງ ຮອງຫົວໜ້າພະແນກວາງແຜນ ແລະ ພັດທະນາການທ່ອງທ່ຽວ
ທ່ານ ທິດພະສອນ ສຸວັນນະພົງ ວິຊາການ ກົມພັດທະນາການທ່ອງທ່ຽວ
ທ່ານ ນາງ ອາລຸຊີ ຈັນທະບູລີ ວິຊາການກົມພັດທະນາການທ່ອງທ່ຽວ
ທ່ານ ວົງແກ້ວ ສີອຳພອນ ວິຊາການກົມພັດທະນາການທ່ອງທ່ຽວ

ກວດແກ້ເນື້ອໃນ:

ທ່ານ ປອ ອາລຸນ ບຸນມີໄຊ ຫົວໜ້າກົມພັດທະນາການທ່ອງທ່ຽວ
ທ່ານ ທະວີເພັດ ອຸລາ ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ
ທ່ານ ນາງ ພອນມະລີ ອິນທະພົມ ຮອງຫົວນ້າກົມພັດທະນາການທ່ອງທ່ຽວ

ອອກແບບ: ທ່ານ ນີວະໄຊ ມາລາທິບ ວິຊາການກົມພັດທະນາການທ່ອງທ່ຽວ

## ເອກະສານອ້າງອີງ


1. ມາດຕະຖານການທ່ອງທ່ຽວໄທ, ມາດຕະຖານກິດຈະກຳເຮືອກາຍັກ/ກາໂນ, ກົມການທ່ອງທ່ຽວ, ກະຊວງທ່ອງທ່ຽວ ແລະ ກິລາ ຣາຊາອານາຈັກໄທ.
2. ກົດລະບຽບວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຸ່ມເຮືອກາຍັກ-ກາໂນ ເມືອງວັງວຽງ ແຂວງວຽງຈັນ ສະບັບເລກທີ **03** ກຮຍ, ລົງວັນທີ **4** ເດືອນ ມິຖຸນາ **2018.**



ກົມພັດທະນາການທ່ອງທ່ຽວ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ສະໜັບສະໜຸນໂດຍ: ໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມການທ່ອງທ່ຽວ ໄລຍະ 2